ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 3324 /ກງ
ນະຄອນຫຼວງວຽງຈັນ, ວັນທີ 01 ຕຸລາ 2025

ໜັງສືເຊີນ

ຮຽນ: .....
.....ທີ່ນັບຖື,

ເລື່ອງ: ເຊີນເຂົ້າຮ່ວມ ກອງປະຊຸມ ລະດັບສູງ ປະທານ ແລະ ປະທານຮ່ວມ ໜ່ວຍງານຂະແໜງການ ເພື່ອ ປຶກສາຫາລືກັບ ຄູ່ຮ່ວມພັດທະນາ.

- ອີງຕາມ ດຳລັດ ວ່າດວ້ຍການຄຸ້ມຄອງ ແລະ ການນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ ສະບັບ ເລກທີ 357/ລບ, ລົງວັນທີ 09 ຕຸລາ 2019;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 538/ນຍ, ລົງວັນທີ 21 ສິງຫາ 2025;
- ອີງຕາມ ໜັງສືສະເໜີຂອງ ກົມຮ່ວມມື ແລະ ການເງິນສາກົນ ສະບັບເລກທີ 0608/ກຮງ, ລົງວັນທີ 25 ກັນຍາ 2025;
- ອີງຕາມ ແຜນວຽກປະຈຳປີ 2025 ຂອງວຽກງານຂະບວນການໂຕະມົນ.

ກະຊວງການເງິນ ຂໍຖືເປັນກຽດຮຽນເຊີນທ່ານ ເຂົ້າຮ່ວມກອງປະຊຸມ ລະດັບສູງ ປະທານ ແລະ ປະທານຮ່ວມ ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ. ໂດຍການເປັນປະທານ ຂອງ ທ່ານ ສຸລິວັດ ສຸວັນນະຈູມຄຳ, ຮອງລັດຖະມົນຕີກະຊວງການເງິນ ແລະ ປະທານຮ່ວມໂດຍ ທ່ານ ບັກໂຮເດຍ ເບີຄານ້ອບ ຜູ້ປະສານງານອົງການສະຫະ ປະຊາຊາດ ປະຈຳ ສປປ ລາວ. ຈຸດປະສົງຂອງກອງປະຊຸມແມ່ນ: (1) ນຳສະເໜີແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X ສະບັບທີ 5 ໂດຍກວມເອົາ ຮ່າງ ຍຸດທະສາດການເງິນ, ກອບການຕິດຕາມ ແລະ ປະເມີນ ເພື່ອ ສະໜັບສະໜູນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X; (2) ຄວາມຄືບໜ້າ ການກະກຽມຈັດກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ແລະ ສະເໜີໃຫ້ໜ່ວຍງານຂະແໜງການທີ່ກ່ຽວຂ້ອງ ໃນການ ຈັດກອງປະຊຸມສົນທະນາ ລະດັບສູງ ເພື່ອນຳຜົນຂອງກອງປະຊຸມດັ່ງກ່າວ ນຳສະເໜີໃນກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ປີ 2025. *(ລາຍລະອຽດເອກະສານໄດ້ຄັດຕິດມາພ້ອມນີ້).*

- **ກອງປະຊຸມຈະໄດ້ຈັດຂຶ້ນໃນວັນທີ: 09 ຕຸລາ 2025; ເວລາ: 08:30 – 12:00 ໂມງ;**
- **ສະຖານທີ່: Holiday Inn & Suites, ນະຄອນຫຼວງວຽງຈັນ.**

ຫວັງຢ່າງຍິ່ງວ່າທ່ານຄົງຈະສະຫຼະເວລາ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ດວ້ຍ.

ລັດຖະມົນຕີ

ສຸລິວັດ ສຸວັນນະຈູມຄຳ

ກະລຸນາຢັ້ງຢືນລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມ ກ່ອນວັນທີ: 06 ຕຸລາ 2025
ຕິດຕໍ່: ທ່ານ ບຸນທະສິນ ໄຊຍະລາດ, Tel: +856 20 22043347,
Email: bounthasinx@gmail.com
CC: rtpsecretariat@gmail.com